# ຈຸດປະສົງ ແລະ ຄາດໝາຍສູ້ຊົນ ຮອດປີ 2020

## 1. ຈຸດປະສົງ:

+ **ວຽກງານຖະແຫຼງຂ່າວ**

- ເພື່ອພັດທະນາສື່ມວນຊົນລາວໃຫ້ມີຄຸນນະພາບ, ເປັນລະບົບ, ທັນສະໄໝ, ວ່ອງໄວ, ຊັດເຈນ ແລະ ທັນເຫດການ.
- ເພື່ອສືບຕໍ່ສ້າງໃຫ້ສື່ມວນຊົນລາວ ເປັນກະບອກສຽງອັນແຫຼມຄົມ ຂອງພັກ-ລັດ ທັງລວງເລິກ ແລະ ລວງກ້ວາງ,ມີຄວາມຫຼາກຫຼາຍທັງຄົບຖ້ວນດ້ານເນື້ອໃນ,ເປັນແຫຼ່ງສະໜອງຂໍ້ມູນຂ່າວສານ ແລະ ໃຫ້ສາລະຄວາມ ຮູ້ຢ່າງ ຮອບດ້ານ.
- ເພື່ອສ້າງຄວາມເຂັ້ມແຂງ ແລະ ເງື່ອນໄຂໃນການພັດທະນາກິດຈະກຳຈາກສື່ມວນຊົນ ໃຫ້ມີຄວາມຫຼາກຫຼາຍ, ຕອບສະໜອງໄດ້ຕາມຄວາມຕ້ອງການ ຂອງສັງຄົມ ພ້ອມທັງສ້າງລາຍຮັບວິຊາການ ແລະ ສາມາດກຸ້ມຕົນເອງທາງດ້ານການເງິນເທື່ອລະກ້າວ.
- ເພື່ອຂະຫຍາຍຂອບເຂດການພົວພັນ, ເຊື່ອມໂຍງກັບເວທີສື່ມວນຊົນສາກົນໃຫ້ນັບມື້ກ້ວາງຂວາງ, ມີຄວາມໝັ້ນຄົງຍືນຍົງ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ.
- ເພື່ອພັດທະນາບຸກຄະລາກອນ ໃນຂະແໜງຖະແຫຼງຂ່າວ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ໂດຍສະເພາະແມ່ນການສົ່ງເສີມບຸກຄະລາກອນໜຸ່ມ ທີ່ມີຄຸນທາດທາງດ້ານການເມືອງໜັກແໜ້ນ ແລະ ມີລະດັບເຕັກ ນິກວິຊາການສື່ ທີ່ສົມຄູ່ກັບຍຸກສະໄໝ.
- ເພື່ອຊຸກຍູ້ການຮ່ວມມື ລະຫ່ວາງ ພາກລັດ ແລະ ພາກເອກະຊົນ, ການຮ່ວມມືກັບຕ່າງປະເທດ ໃນການສົ່ງ ເສີມການລົງທຶນ ໃນວຽກງານຖະແຫຼງຂ່າວ ໃຫ້ກ້ວາງຂວາງ.
- ເພື່ອຫັນການຄຸ້ມຄອງສື່ມວນຊົນໃຫ້ມີຄວາມເຂັ້ມແຂງ ແລະ ເປັນທັນສະໄໝ.

+ **ວຽກງານວັດທະນະທຳ**

- ເພື່ອສືບຕໍ່ສົ່ງເສີມການອານຸລັກ, ປົກປັກຮັກສາ, ຟື້ນຟູ ສືບທອດ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະ ດົກວັດທະນະທຳອັນດີງາມ ຂອງຊາດໃຫ້ມີຄວາມຍືນຍົງ.
- ເພື່ອສົ່ງເສີມການພັດທະນາ ອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ, ພ້ອມທັງຮັບເອົາຄຸນຄ່າວັດທະນະທຳທີ່ກ້າວໜ້າ ຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ, ສາມາດເຊື່ອມໂຍງກັບສາກົນ.
- ເພື່ອປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ, ກ້າວໄປເຖິງການສ້າງເປັນອຸດສາຫະກຳ ວັດທະນະທຳໃນອານາຄົດ. ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຢ່າງຍືນຍົງ.

- ເພື່ອໂຄສະນາ, ເຜີຍແຜ່ວຽກງານວັດທະນະທຳອັນດີງາມ ຂອງຊາດ ອອກສູ່ສັງຄົມທັງພາຍໃນ ແລະ ຕ່າງປະເທດ , ພ້ອມທັງສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທຳທີ່ເປັນໄພຕໍ່ສັງຄົມ.
- ເພື່ອພັດທະນາບຸກຄະລາກອນໃນຂົງເຂດວັດທະນະທຳໃຫ້ມີຄວາມເຂັ້ມແຂງທັງປະລິມານ ແລະຄຸນນະພາບ.
- ເພື່ອສ້າງ, ພັດທະນາພື້ນຖານໂຄງລ່າງ ໃນຂະແໜງວັດທະນະທຳ ໃຫ້ສົມຄູ່ກັບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ.
- ເພື່ອຄຸ້ມຄອງບໍລິຫານ, ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດວຽກງານ ໃນຂົງເຂດວັດທະນະທຳຢ່າງເປັນລະບົບຕໍ່ເນື່ອງ.

**+ <u>ວຽກງານທ່ອງທ່ຽວ</u>**

- ເພື່ອພັດທະນາການທ່ອງທ່ຽວລາວ ໃຫ້ມີຄວາມຍືນຍົງຕາມທິດ ສົ່ງເສີມການທ່ອງທ່ຽວ ທຳມະຊາດ, ການທ່ອງທ່ຽວວັດທະນະທຳ ແລະ ທ່ອງທ່ຽວປະຫວັດສາດ.
- ເພື່ອເຮັດໃຫ້ ສປປ ລາວກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ຂອງນັກທ່ອງທ່ຽວໃນທົ່ວໂລກ.
- ເພື່ອເຊື່ອມໂຍງການທ່ອງທ່ຽວ ຂອງ ສປປ ລາວ ເຂົ້າກັບການທ່ອງທ່ຽວໃນລະດັບພາກພື້ນ ແລະ ສາກົນ.
- ເພື່ອພັດທະນາ, ຄຸ້ມຄອງ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ກາຍປັນຂະແໜງບູລິມາສິດອັນໜຶ່ງ, ຊ່ວຍໃຫ້ປະຊາຊົນຫຼຸດພົ້ນອອກຈາກຄວາມທຸກຍາກ ຕາມນະໂຍບາຍ ຂອງລັດຖະບານ.
- ເພື່ອພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວໃຫ້ມີຄຸນນະພາບ, ສາມາດຕອບສະໜອງ ການບໍລິການ ທີ່ປະທັບໃຈແກ່ນັກທ່ອງທ່ຽວ ແລະ ສາມາດເຊື່ອມໂຍງກັບສາກົນ ເທື່ອລະກ້າວ.
- ເພື່ອການພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນທົ່ວປະເທດ ແລະ ພັດ ທະນາສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກ.
- ເພື່ອສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ, ສຳຫຼວດ,ຈັດສັນແຫຼ່ງທ່ອງທ່ຽວ, ປັບປຸງ ແລະ ພັດທະນາສະຖານ ທີ່ທ່ອງທ່ຽວ ທີ່ມີການບໍລິການແບບຄົບວົງຈອນ ແລະ ມີຄຸນນະພາບ.
- ເພື່ອກໍ່ສ້າງສິ່ງອຳນວຍຄວາມສະດວກ ໃນແຫຼ່ງທ່ອງທ່ຽວ, ປັກຫຼັກໝາຍຂອບເຂດແຫຼ່ງທ່ອງທ່ຽວ ໃນທົ່ວປະເທດ ແລະ ສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ພ້ອມທັງປະກອບອຸປະກອນສື່ສານ ໃຫ້ເປັນລະບົບ ຢູ່ ແຕ່ລະດ່ານສາກົນ.
- ເພື່ອສ້າງ, ປັບປຸງບັນດານິຕິກຳ, ມາດຕະຖານການທ່ອງທ່ຽວ ແລະ ເຜີຍແຜ່ບັນດານິຕິກຳຂະແໜງການທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ.
- ເພື່ອສົ່ງເສີມໃຫ້ມີການລົງທຶນໃນຂະແໜງການທ່ອງທ່ຽວ ແລະ ຄຸ້ມຄອງການລົງທຶນໃຫ້ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນຂອບເຂດທົ່ວປະເທດ.
- ເພື່ອຈັດລະດັບມາດຕະຖານ ແລະ ປະເພດ ໃຫ້ບັນດາຫົວໜ່ວຍທຸລະກິດ ການບໍລິການໃນຂະແໜງການ ທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ.
- ເພື່ອເຮັດໃຫ້ການຄຸ້ມຄອງ ບັນດາກິດຈະການທຸລະກິດທ່ອງທ່ຽວ ແລະ ການບໍລິການໃນຂະແໜງການທ່ອງທ່ຽວແທດເໝາະກັບສະພາບການ ຂະຫຍາຍຕົວຂອງການທ່ອງທ່ຽວ, ສະກັດກັ້ນປະກົດການຫຍໍ້ທໍ້ ແລະ ຜົນກະທົບທາງລົບ ທີ່ອາດຈະເກີດຂຶ້ນໃນຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

- ເພື່ອພັດທະນາຊັບພະຍາກອນມະນຸດ ໃນຂະແໜງທ່ອງທ່ຽວໃຫ້ມີຄວາມສາມາດ, ປັບປຸງຫຼັກສູດການຮຽນການສອນ ໃຫ້ເຊື່ອມໂຍງກັບສາກົນເທື່ອລະກ້າວ, ສ້າງເຄືອຄ່າຍການປະສານງານພາກລັດ, ເອກະຊົນ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການສຶກສາ ໃນຂະແໜງການທ່ອງທ່ຽວ.

+ <u>ວຽກງານເສນາທິການ</u>

- ເພື່ອປັບປຸງ ແລະ ພັດທະນາການຄຸ້ມຄອງວຽກງານບໍລິຫານ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ເປັນລະບົບ.
- ເພື່ອປັບປຸງກົງຈັກການຈັດຕັ້ງ ຂອງກະຊວງໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ.
- ເພື່ອກໍ່ສ້າງ ແລະ ພັດທະນາບຸກຄະລາກອນ ໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ, ມີຄຸນສົມບັດ ແລະ ຄວາມສາມາດ.
- ເພື່ອລະດົມແຫຼ່ງທຶນ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນພັດທະນາ, ການນຳໃຊ້ງົບປະມານ ແລະ ການລົງທຶນໃນທົ່ວຂະແໜງການຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.
- ເພື່ອເປີດກວ້າງການຮ່ວມມື, ແລກປ່ຽນ ແລະ ເຊື່ອມໂຍງກັບສາກົນໃນວຽກງານຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ.
- ເພື່ອຕິດຕາມ,ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ເປັນລະບົບ, ຖືກຕ້ອງຕາມລະບຽບກົດໝາຍ.

## 2. <u>ຄາດໝາຍສູ້ຊົນລວມ ຂອງການພັດທະນາວຽກງານ ຖວທ ຮອດປີ 2020</u>

**+ <u>ວຽກງານຖະແຫຼງຂ່າວ</u>**

**ຄາດໝາຍສູ້ຊົນຮອດປີ 2020 ມີດັ່ງນີ້:**

- ສູ້ຊົນພັດທະນາບຸກຄະລາກອນສື່ ໃຫ້ໄດ້ 3000 ເທື່ອຄົນ, ໃຫ້ມີຄວາມຮູ້ຄວາມສາມາດ ທາງດ້ານວິຊາການ, ນິຕິກຳ, ກົດໝາຍ ແລະ ທິດສະດີການເມືອງ ເພື່ອຮອງຮັບການພັດທະນາ ວຽກງານຖະແຫຼງຂ່າວ ສື່ມວນຊົນ.
- ສູ້ຊົນກໍ່ສ້າງຂະຫຍາຍພື້ນຖານໂຄງລ່າງອາຄານຫ້ອງການ ແລະ ປະກອບອຸປະກອນພາຫະນະຕ່າງໆ ໃຫ້ພຽງພໍ ຂະຫຍາຍພື້ນຖານໂຄງລ່າງໃຫ້ໄດ້ 145 ຕົວເມືອງໃນ 18 ແຂວງ ທົ່ວປະເທດ ແລະ ຂະຫຍາຍຕາໜ່າງສື່ມວນຊົນໃຫ້ກວມ 90 ສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ.
- ສູ້ຊົນປັບປຸງ ແລະ ປ່ຽນຖ່າຍລະບົບເຕັກນິກໃຫ້ທັນສະໄໝ ຈາກລະບົບອານາລັອກ ໄປສູ່ລະບົບດີຈີຕ້ອນ ໃຫ້ໄດ້ໃນຂອບເຂດທົ່ວປະເທດ ແລະ ສາມາດເຊື່ອມໂຍງກັບສາກົນ.
- ສູ້ຊົນຂະຫຍາຍການຮ່ວມມື ດ້ານວຽກງານຖະແຫຼງຂ່າວສື່ມວນຊົນ ກັບບັນດາປະເທດອາຊຽນ ແລະປະເທດ ຄູ່ຮ່ວມເຈລະຈາ ໃຫ້ມີຄວາມໝັ້ນທ່ຽງ ຮັບປະກັນສະຖຽນລະພາບ ດ້ານຂໍ້ມູນຂ່າວສານ.
- ສູ້ຊົນປັບປຸງໃຫ້ຂະແໜງການຖະແຫຼງຂ່າວສື່ມວນຊົນ ໃຫ້ມີເນື້ອໃນຄົບຖ້ວນ, ແຫຼມຄົມ, ມີຫຼາຍຮູບຫຼາຍສີ ແລະ ສົ່ງຜ່ານພາຫະນະສື່ມວນຊົນ ໃຫ້ລົງເຖິງປະຊາຊົນ ໃນຂອບເຂດທົ່ວປະເທດ.

**+ <u>ວຽກງານວັດທະນະທຳ</u>**

**ຄາດໝາຍສູ້ຊົນຮອດປີ 2020 ມີດັ່ງນີ້:**

- ສູ້ຊົນສ້າງໃຫ້ມີຄອບຄົວວັດທະນະທຳ ກວມ **80%**, ບ້ານວັດທະນະທຳ ກວມ **65%** ແລະ ກຸ່ມບ້ານວັດທະນະທຳ ກວມ **16%** (ຂອງຈຳນວນຄອບຄົວ, ບ້ານ ແລະ ກຸ່ມບ້ານໃນທົ່ວປະເທດ).
- ສູ້ຊົນຟື້ນຟູ, ອະນຸລັກ ແລະ ສົ່ງເສີມມໍລະດົກວັດທະນະທຳທາງດ້ານວັດຖຸ ແລະ ບໍ່ເປັນວັດຖຸ ທີ່ເປັນເອກະ ລັກແຕ່ລະປະເພດໃຫ້ໄດ້ **80%.**
- ສູ້ຊົນເກັບກຳຂໍ້ມູນ ແລະ ຈັດພິມປຶ້ມຜົນງານການຄົ້ນຄວ້າວຽກງານວັດທະນະທຳ ດ້ານຕ່າງໆ ໃຫ້ໄດ້ **80%.**
- ສູ້ຊົນຈັດຕັ້ງເຜີຍແຜ່ ການສ້າງແບບແຜນດຳລົງຊີວິດວັດທະນະທຳໃໝ່, ປູກຈິດສຳນຶກໃຫ້ປະຊາຊົນບັນດາ ເຜົ່າຮັບຮູ້ຄຸນຄ່າວັດທະນະທຳຂອງຊາດ ຢູ່ຕົວເມືອງໃຫຍ່ ແລະ ເຂດຊຸມຊົນ ໃນທົ່ວປະເທດ ໃຫ້ໄດ້ **50-60** ຄັ້ງ.
- ສູ້ຊົນປັບປຸງ ແລະ ສ້າງນິຕິກຳຄຸ້ມຄອງວຽກງານວັດທະນະທຳ ທຸກຂະແໜງການໃຫ້ໄດ້ **70-80%.**
- ສູ້ຊົນສ້າງກອງທຶນ ສົ່ງເສີມວັດທະນະທຳ ຂອງແຕ່ລະຂະແໜງການ ໃຫ້ໄດ້ **60%** ຂຶ້ນໄປ.
- ສູ້ຊົນສົ່ງເສີມການອ່ານ ໃຫ້ໄດ້ **2/3** ຂອງຈຳນວນປະຊາກອນ ທັງໝົດ ໃນ ສປປ ລາວ.
- ສູ້ຊົນຂຶ້ນທະບຽນຈັດປະເພດ ຫົວໜ່ວຍປະກອບການ ທາງດ້ານວັດທະນະທຳ ຈາກຂະແໜງຕ່າງໆ ທີ່ເປັນຂອງລັດ, ລວມໝູ່ ແລະ ເອກະຊົນໃນທົ່ວປະເທດ ໃຫ້ສຳເລັດ.
- ສູ້ຊົນສ້າງ ແລະ ປັບປຸງຫໍພິພິທະພັນ ວັດທະນະທຳບັນດາເຜົ່າ, ປະຫວັດສາດ ລະດັບທ້ອງຖິ່ນ ແລະ ລະດັບຊາດ ໃຫ້ໄດ້ແຂວງ ລະ **1** ແຫ່ງ.
- ສູ້ຊົນສ້າງແຜນແມ່ບົດຄຸ້ມຄອງ, ປົກປັກຮັກສາທົ່ງໄຫຫີນ ແຂວງຊຽງຂວາງ ແລະ ຫີນໜາມໜໍ່ ແຂວງຄຳມ່ວນ ໃຫ້ສຳເລັດ ເພື່ອສະເໜີເຂົ້າເປັນມໍລະດົກໂລກ ລະຫວ່າງ ປີ **2016-2020.**
- ສູ້ຊົນຍົກລະດັບມໍລະດົກ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດລະດັບທ້ອງຖິ່ນ ໃຫ້ເປັນມໍລະດົກລະດັບຊາດ ໃຫ້ໄດ້ **20** ແຫ່ງ ໃນລະຫວ່າງ ປີ **2016-2020.**
- ສູ້ຊົນຍົກລະດັບມໍລະດົກວັດທະນະທຳ ທີ່ບໍ່ເປັນວັດຖຸລະດັບທ້ອງຖິ່ນ ຂຶ້ນເປັນມໍລະດົກລະດັບຊາດ ໃຫ້ໄດ້ **50** ລາຍການ ແລະ ຄົ້ນຄວ້ານຳສະເໜີ ເຂົ້າໃນບັນຊີມໍລະດົກວັດທະນະທຳ ທີ່ບໍ່ເປັນວັດຖຸລະດັບໂລກ ໃຫ້ໄດ້ **5** ປະເພດຮອດ ປີ **2020.**
- ໃຫ້ສຳເລັດການລວບລວມຂໍ້ມູນ ທາງດ້ານບູຮານວິທະຍາທັງໝົດ **18** ແຂວງ ໃຫ້ລວມສູນທົ່ວປະເທດ.
- ສູ້ຊົນສຳຫຼວດ, ຂຸດຄົ້ນ ແລະ ຄົ້ນຄວ້າແຫຼ່ງບູຮານຄະດີ ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດກ່ອນປີ **2020.**
- ສູ້ຊົນສ້າງສວນອຸດທິຍານ ທາງດ້ານວັດທະນະທຳລະດັບຊາດ ແລະ ລະດັບທ້ອງຖິ່ນໃຫ້ໄດ້ ແຂວງລະ **1** ແຫ່ງ.
- ສູ້ຊົນຊຸກຍູ້ການສ້າງສະມາຄົມວິຊາຊີບ, ສູນຄົ້ນຄວ້າ,ກຳນົດລາງວັນລະດັບພູມີພາກ ຂອງຂະແໜງວັດທະນະທຳ ດ້ານຕ່າງໆ ໃຫ້ສຳເລັດ.
- ສູ້ຊົນຊຸກຍູ້ ສ້າງຜະລິດຕະພັນວັດທະນະທຳ ທຸກຂະແໜງການໃຫ້ມີຄຸນນະພາບ, ອຸດົມສົມບູນຫຼາກຫຼາຍສີສັນ, ສ້າງເຄືອຄ່າຍລະບົບຖານຂໍ້ມູນ, ການບໍລິການ ແລະ ການຊົມໃຊ້ທັງ ພາຍໃນ ແລະ ຕ່າງປະເທດ ໃຫ້ກາຍເປັນອຸດສາຫະກຳ ແລະ ທັນສະໄໝ ໃຫ້ໄດ້ **50%.**

- ສູ້ຊົນຊຸກຍູ້ການຈັດງານວາງສະແດງ ແລະ ໂຄສະນາເຜີຍແຜ່ຜະລິດຕະພັນ ທາງດ້ານວັດທະນະທຳ ຂະແໜງຕ່າງໆ ຢູ່ພາຍໃນ **10** ຄັ້ງ ແລະ ຕ່າງປະເທດ ຢ່າງໜ້ອຍໃຫ້ໄດ້ ປີລະ **3** ຄັ້ງ.

- ສູ້ຊົນສ້າງ ແລະ ຍົກລະດັບຂີດຄວາມສາມາດ ໃຫ້ແກ່ບຸກຄະລາກອນຜູ້ສືບທອດ ທາງດ້ານບໍລິຫານ, ວິຊາການ, ເຕັກນິກ ແລະ ທິດສະດີການເມືອງການປົກຄອງ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ເພີ່ມຂຶ້ນ **50-60%** ໃນບຸກຄະລາກອນທັງໝົດ ຂອງຂະແໜງການວັດທະນະທຳ.

- ສູ້ຊົນສ້າງ, ປັບປຸງຫຼັກສູດການຮຽນ-ການສອນ ໃຫ້ມີຄຸນນະພາບ ໃນຂະແໜງການວັດທະນະທຳ ດ້ານຕ່າງໆ ນັບແຕ່ລະດັບພື້ນຖານຈົນເຖິງລະດັບຊັ້ນສູງ, ປະລິນຍາຕີ ແລະ ປະລິນຍາໂທ ໃຫ້ສຳເລັດ **70%.**

- ສູ້ຊົນຊຸກຍູ້ການກໍ່ສ້າງພື້ນຖານໂຄງລ່າງທີ່ມາດຕະຖານ, ໝັ້ນຄົງ ແລະປະກອບອຸປະກອນເຕັກນິກທັນສະໄໝ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ຂະແໜງວັດທະນະທຳທຸກປະເພດ, ທຸກລະດັບ ໃນທົ່ວປະເທດ ໃຫ້ໄດ້ **80%.**

- ສູ້ຊົນສ້າງລາຍການ ສິລະປະການສະແດງປະເພດຕ່າງໆ ໃນເວທີລະດັບຊາດ, ສາກົນ ໃຫ້ໄດ້ **120** ລາຍການ

- ສູ້ຊົນຊຸກຍູ້ການສ້າງວັດທະນະທຳຕົວແບບ (ບ້ານວັດທະນະທຳຕົວແບບ) ໃຫ້ໄດ້ ປີລະ **2** ບ້ານ, (ສ້າງເມືອງວັດທະນະທຳຕົວແບບໃນແຂວງທີ່ມີເງື່ອນໄຂ) ໃຫ້ໄດ້ **3** ເມືອງ ໃນທົ່ວປະເທດ.

- ສູ້ຊົນປັບປຸງ ແລະ ພັດທະນາພື້ນຖານໂຄງລ່າງການຜະລິດຮູບເງົາທັນສະໄໝໃນລະບົບ **HD** ໃຫ້ໄດ້ **20%.**

- ສູ້ຊົນສ້າງຮູບເງົາປະເພດຕ່າງໆ ໃຫ້ໄດ້ **16** ເລື່ອງຕໍ່ປີ ໃນລະຫວ່າງ ປີ **2016-2020.**

- ສູ້ຊົນໃຫ້ສຳເລັດການສາຍຮູບເງົາເຄື່ອນທີ່ ຮັບໃຊ້ພໍ່ແມ່ປະຊາຊົນ ຢູ່ເຂດຫ່າງໄກສອກຫຼີກ ໃນທົ່ວປະເທດ ໃຫ້ໄດ້ **50** ບ້ານ.

- ສູ້ຊົນຊຸກຍູ້ການສ້າງຕັ້ງ ບໍລິສັດຜະລິດຮູບເງົາ ພາກເອກະຊົນໃຫ້ໄດ້ **5** ບໍລິສັດ.

**+ <u>ວຽກງານທ່ອງທ່ຽວ</u>**

**ຄາດໝາຍສູ້ຊົນ ຮອດປີ 2020 ມີດັ່ງນີ້:**

- ສູ້ຊົນດຶງດູດນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ສປປ ລາວ ໃຫ້ໄດ້ປະມານ **6** ລ້ານຄົນຕໍ່ປີ, ສະເລ່ຍ ໄລຍະການພັກເຊົາ ຂອງນັກທ່ອງທ່ຽວບໍ່ຕ່ຳກວ່າ **10** ວັນ/ຄົນ, ແລະ ສ້າງລາຍຮັບຈາກການທ່ອງທ່ຽວ ໃຫ້ໄດ້ **953** ລ້ານໂດລາສະຫະລັດ.

- ສູ້ຊົນພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນທົ່ວປະເທດໃຫ້ໄດ້ກ່ອນປີ **2020** ແລະ ພັດທະນາສິ່ງອຳນວຍຄວາມສະດວກຢູ່ຈຸດເຊື່ອມຕໍ່ ແຕ່ລະພາກໃຫ້ສາມາດບໍລິການໄດ້.

- ສູ້ຊົນສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ ໃຫ້ໄດ້ **25** ແຫ່ງ, ສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວໃຫ້ໄດ້ **40** ແຫ່ງ, ປັບປຸງ ແລະ ພັດທະນາສະຖານທີ່ທ່ອງທ່ຽວທີ່ມີຈຸດເດັ່ນ ໃຫ້ຜົນຕອບແທນທາງດ້ານເສດຖະກິດໄດ້ໄວ ແລະ ມີຄຸນນະພາບ ໃຫ້ໄດ້ **10** ແຫ່ງ.

- ສູ້ຊົນສ້າງສິ່ງອຳນວຍຄວາມສະດວກໃນແຫຼ່ງທ່ອງທ່ຽວ ໃຫ້ໄດ້ **200** ແຫ່ງ. ປັກຫຼັກໝາຍຂອບເຂດແຫຼ່ງທ່ອງທ່ຽວໃຫ້ໄດ້ **30** ແຫ່ງ. ໃນແຕ່ລະແຂວງ ແລະ ສູ້ຊົນໃຫ້ມີຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ພ້ອມທັງປະກອບອຸປະກອນການສື່ສານ ໃຫ້ເປັນລະບົບຢູ່ແຕ່ລະແຂວງ ແລະ ດ່ານສາກົນ.

- ພັດທະນາຜະລິດຕະພັນ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໃຫ້ໄດ້ຫຼາຍກວ່າ **100** ຜະລິດຕະພັນ.

- ຮອດປີ **2020** ສູ້ຊົນໃຫ້ພະນັກງານທີ່ເຮັດວຽກໃນຂະແໜງການທ່ອງທ່ຽວ ໄດ້ຮັບການຝຶກອົບຮົມຍົກລະ ດັບວິຊາການຢ່າງໜ້ອຍ **4,000** ຄົນ.

- ສ້າງນິຕິກຳ ແລະ ມາດຕະຖານການຄຸ້ມຄອງການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ. ສຳເລັດການເຜີຍແຜ່ກົດໝາຍການທ່ອງທ່ຽວ ແລະ ບັນດານິຕິກຳ ຂອງຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

- ຈັດລະດັບມາດຕະຖານ ແລະ ປະເພດໃຫ້ບັນດາຫົວໜ່ວຍທຸລະກິດການບໍລິການ ໃນຂະແໜງການທ່ອງທ່ຽວໃນຂອບເຂດທົ່ວປະເທດ.

- ສຳເລັດການເຊື່ອມໂຍງເວັບໄຊໂຄສະນາການທ່ອງທ່ຽວລາວເຂົ້າກັບເວັບໄຊຂອງ ASEAN,GMS,PATA ຂະ ຫຍາຍຜູ້ຕາງໜ້າ ຫຼື ຕົວແທນການທ່ອງທ່ຽວລາວຢູ່ຕ່າງປະເທດທີ່ ເປັນຕະຫຼາດທ່ອງທ່ຽວ ຕົ້ນຕໍຂອງ ສປປ ລາວ ໃຫ້ໄດ້ **5** ປະເທດ.

- ສູ້ຊົນຈັດງານປີທ່ອງທ່ຽວລາວ ຄັ້ງທີ **3** ໃນປີ **2018** ໃຫ້ປະກົດຜົນເປັນຈິງ.

- ສູ້ຊົນສະໜອງຂໍ້ມູນຂ່າວສານ ແລະ ຕູ້ສະໜອງຂໍ້ມູນຂ່າວສານ ລະບົບສຳຜັດໜ້າຈໍ (Kiosk Touch Screen)ໃຫ້ແກ່ຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວປະຈຳຢູ່ທຸກໆແຂວງ ໃນຂອບເຂດທົ່ວປະເທດແລະດ່ານສາກົນ.

- ສູ້ຊົນໃຫ້ມີເອກະສານ ແລະ ສິ່ງພິມໂຄສະນາກ່ຽວກັບການທ່ອງທ່ຽວລາວ (ແຜນທີ່, ແຜ່ນພັບ, ປື້ມຄູ່ມື, ປົກສະເຕີ CD, DVD,TV Spot, ສາລະຄະດີ ແລະ ອື່ນໆ) ໃຫ້ຄົບຖ້ວນ ແລະ ພຽງພໍກັບຄວາມຕ້ອງການ ທັງສາມາດ ລົງໂຄສະນາໃນສື່ຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ.

+ <u>ວຽກງານເສນາທິການ</u>

**ຄາດໝາຍສູ້ຊົນຮອດປີ 2020 ມີດັ່ງນີ້:**

- ສູ້ຊົນປະກອບອຸປະກອນຮັບໃຊ້ວຽກງານວິຊາການ ໃນທົ່ວຂະແໜງການ ບໍ່ໃຫ້ຫຼຸດ **90%** ຕາມຄວາມຕ້ອງການຂອງວຽກງານ.

- ສູ້ຊົນໃນການສ້າງລະບົບຖານຂໍ້ມູນ ແບບເອເລັກໂຕນິກສາມາດເຊື່ອມໂຍງຂໍ້ມູນຂ່າວສານ ການເຄື່ອນໄຫວວຽກງານ ຂອງຂະແໜງ ຖວທ ທັງສູນກາງ ແລະ ທົ່ວທ້ອງຖິ່ນໃຫ້ໄດ້ ສຳເລັດ **80%**

- ສູ້ຊົນປັບປຸງກົງຈັກການຈັດຕັ້ງ ຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນທົ່ວກະຊວງ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງກ່ວາເກົ່າ.

- ສູ້ຊົນປັບປຸງພາລະບົດບາດຕໍາແໜ່ງງານ ຂອງກະຊວງ ຖວທ ໃຫ້ສຳເລັດ **1** ສະບັບ ໃຫ້ນຳໃຊ້ໄດ້ຍາວນານ.

- ສູ້ຊົນຍົກລະດັບພະນັກງານ ຜູ້ທີ່ເຮັດວຽກງານຈັດຕັ້ງໃຫ້ໄດ້ **15%.**

- ສູ້ຊົນຍົກລະດັບວິຊາສະເພາະ ໃຫ້ແກ່ພະນັກງານທົ່ວກະຊວງໄປຮຽນ ພາຍໃນ **257** ຄົນ ແລະ ຮຽນຕ່າງປະເທດບໍ່ຫຼຸດ **175** ຄົນ.

- ສູ້ຊົນສ້າງແຜນຍຸດທະສາດພັດທະນາວຽກງານຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ ຂອງ ສປປ ລາວ ສຳລັບ **2021-2030** ໃຫ້ສຳເລັດ

- ສູ້ຊົນເຮັດໃຫ້ແມ່ຍິງມີບົດບາດໃນການຕັດສິນບັນຫາ ແລະ ຊີ້ນຳວຽກງານຕ່າງໆ ຂອງກະຊວງໃຫ້ໄດ້ **15%** ຂອງບັນດາຕຳແໜ່ງງານ.

- ສູ້ຊົນໃຫ້ແມ່ຍິງເຂົ້າເຖິງແຫຼ່ງການສຶກສາ ລະດັບປະລິນຍາໂທ ແລະ ປະລິນຍາເອກ ປະມານ **10%** ຂອງແມ່ຍິງທົ່ວກະຊວງ.

- ສູ້ຊົນສ້າງສັນຍາຮ່ວມມື (MOU) ແລະ ຜັນຂະຫຍາຍກິດຈະກຳໃນຂອບການຮ່ວມມື **2** ຝ່າຍໃຫ້ໄດ້ຫຼາຍກວ່າ **10** ປະເທດ.

- ສູ້ຊົນຈັດກອງປະຊຸມເຜີຍແຜ່ ວຽກງານອາຊຽນທົ່ວກະຊວງ ຖວທ ໃຫ້ໄດ້ບໍ່ຕ່ຳກ່ວາ **10** ຄັ້ງ.

- ສູ້ຊົນຜັນຂະຫຍາຍບັນດາຖະແຫຼງການຕ່າງໆ ທີ່ອາຊຽນໄດ້ຮັບຮອງແລ້ວ**ນັ້ນ** ໃຫ້ປະກົດຜົນເປັນຈິງ.

- ສູ້ຊົນປັບປຸງກົນໄກປະສານງານ, ພັດທະນາບຸກຄະລາກອນເຮັດວຽກງານຮ່ວມມື ໃຫ້ມີຄຸນນະພາບ, ສອດ ຄ່ອງກັບຄວາມຕ້ອງການ ຂອງວຽກງານໃນແຕ່ລະໄລຍະ ແລະ ເປັນກົງຈັກກະທັດລັດ ທີ່ເຮັດວຽກມີປະສິດທິຜົນ.

- ສູ້ຊົນປັບປຸງວຽກງານກວດກາທົ່ວຂະແໜງ ຖວທ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

- ສູ້ຊົນລະດົມທຶນຈາກພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃຫ້ມີຈຳນວນເພີ່ມຂຶ້ນ.